**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

00001342

ກະຊວງການຕ່າງປະເທດ ເລກທີ /ຕປທ.ສພກ
ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ນະຄອນຫຼວງວຽງຈັນ, ວັນທີ 07 ມິຖຸນາ 2020
ແກ້ໄຂການລະບາດຂອງພະຍາດ COVID-19

# ຄຳແນະນຳ

## ສຳລັບການເດີນທາງເຂົ້າ-ອອກ ສປປ ລາວ ໃນໄລຍະດຳເນີນມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19

- ອີງຕາມຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ ສະບັບເລກທີ 09/ນຍ, ລົງວັນທີ 03 ກຸມພາ 2020;
- ອີງຕາມແຈ້ງການວ່າດ້ວຍການສືບຕໍ່ປະຕິບັດບັນດາມາດຕະການໃນການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ສະບັບເລກທີ 524/ຫລນຍ, ລົງວັນທີ 01 ມິຖຸນາ 2020;

ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຂອງກະຊວງການຕ່າງປະເທດ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ເນື່ອງຈາກວ່າ ລັດຖະບານລາວ ຍັງສືບຕໍ່ປິດດ່ານຊາຍແດນທາງບົກ ແລະ ທາງອາກາດໃນຂອບເຂດທົ່ວປະເທດ ເພື່ອປ້ອງກັນ ແລະ ສະກັດກັ້ນການລະບາດທີ່ຮ້າຍແຮງ ຢູ່ ສປປ ລາວ ຂອງພະຍາດ ໂຄວິດ-19, ບຸກຄົນ ຫຼື ນິຕິບຸກຄົນໃດ ທີ່ມີຈຸດປະສົງຈະເດີນທາງເຂົ້າ-ອອກ ສປປ ລາວ ຈະຕ້ອງໄດ້ປະຕິບັດຕາມຂັ້ນຕອນ ແລະ ມາດຕະການ ດັ່ງລຸ່ມນີ້:

**1. ຂາເຂົ້າ**

**ກ. ກ່ອນເດີນທາງເຂົ້າ ສປປ ລາວ**

- ບຸກຄົນ ຫຼື ນິຕິບຸກຄົນ ຕ້ອງຂຽນຄຳຮ້ອງ ທີ່ລະບຸລາຍລະອຽດກ່ຽວກັບ ວັນເວລາ, ດ່ານທີ່ຈະເດີນທາງເຂົ້າ, ພາຫະນະໃນການເດີນທາງ, ປະເທດທີ່ຈະເດີນທາງຜ່ານ ແລະ ເຫດຜົນຄວາມຈຳເປັນຮີບດ່ວນ ຂອງການເດີນທາງເຂົ້າ ສປປ ລາວ ເຖິງຄະນະສະເພາະກິດກະຊວງການຕ່າງປະເທດ ໂດຍຜ່ານຂະແໜງການທີ່ກ່ຽວຂ້ອງ ຂອງ ສປປ ລາວ;
- ພາຍຫຼັງໄດ້ຮັບອະນຸຍາດແລ້ວ, ບຸກຄົນ ຫຼື ນິຕິບຸກຄົນ ທີ່ບໍ່ທັນມີວີຊາເຂົ້າ ສປປ ລາວ ຈະຕ້ອງປະກອບຄຳຮ້ອງຂໍວີຊາທີ່ສະຖານເອກອັກຄະລັດຖະທູດ ຫຼື ສະຖານກົງສຸນໃຫຍ່ ແຫ່ງ ສປປ ລາວ ຢູ່ປະເທດຕົ້ນທາງ. ສ່ວນຜູ້ທີ່ໄດ້ຮັບວີຊາທີ່ຍັງມີອາຍຸນຳໃຊ້ ສາມາດນຳໃຊ້ວີຊາດັ່ງກ່າວ ເດີນທາງເຂົ້າມາ ສປປ ລາວ;
- ບຸກຄົນ ຫຼື ນິຕິບຸກຄົນ ຈະຕ້ອງມີໃບຢັ້ງຢືນການກວດ COVID-19 ຈາກສະຖານທີ່ບໍລິການສາທາລະນະສຸກ ທີ່ສາມາດກວດສອບໄດ້ ແລະ ອອກໃຫ້ບໍ່ເກີນ 72 ຊົ່ວໂມງ ກ່ອນເດີນທາງເຂົ້າ ສປປ ລາວ;
- ສຳລັບພົນລະເມືອງລາວ ທີ່ມີຈຸດປະສົງຢາກເດີນທາງກັບ ສປປ ລາວ ໃຫ້ລົງທະບຽນຢູ່ສະຖານເອກອັກຄະລັດຖະທູດ ຫຼື ສະຖານກົງສຸນໃຫຍ່ ແຫ່ງ ສປປ ລາວ ຢູ່ປະເທດທີ່ຕົນອາໄສຢູ່ ເພື່ອອຳນວຍຄວາມສະດວກໃຫ້ພວກກ່ຽວເດີນທາງກັບ ສປປ ລາວ.

**ຂ. ເວລາມາເຖິງດ່ານຊາຍແດນ ແລະ ສະໜາມບິນສາກົນ**

- ທຸກຄົນຈະຕ້ອງຜ່ານການກວດແທກອຸນຫະພູມ;

- ປະກອບແບບຟອມຂໍ້ມູນສຸຂະພາບໃຫ້ຖືກຕ້ອງ ແລະ ຄົບຖ້ວນ;
- ກໍລະນີກວດພົບວ່າມີໄຂ້ ຫຼື ອາການສົງໄສກ່ຽວກັບພະຍາດ COVID-19 ຈະໄດ້ສົ່ງເຂົ້າໄປແຍກປ່ຽວຢູ່ໂຮງໝໍເພື່ອເກັບຕົວຢ່າງມາກວດວິເຄາະຫາເຊື້ອພະຍາດ COVID-19;
- ກໍລະນີກວດພົບວ່າບໍ່ມີໄຂ້ ຫຼື ບໍ່ມີອາການສົງໄສກ່ຽວກັບພະຍາດ COVID-19 ຈະໄດ້ແນະນຳໃຫ້ໄປຈຳກັດບໍລິເວນຢູ່ຕາມສະຖານທີ່ຖືກກຳນົດໄວ້ ເພື່ອເກັບຕົວຢ່າງມາກວດວິເຄາະຫາເຊື້ອພະຍາດ COVID-19;
- ແຈ້ງເຂົ້າ ສປປ ລາວ ຕາມກົດໝາຍ ແລະ ລະບຽບການ ທີ່ໄດ້ກຳນົດໄວ້ ໂດຍໃຫ້ຮັກສາໄລຍະຫ່າງ 1-2 ແມັດ.

**ຄ. ເວລາຜ່ານດ່ານເຂົ້າມາ ສປປ ລາວ**

- ທຸກຄົນຈະຖືກເກັບຕົວຢ່າງມາວິເຄາະຫາເຊື້ອພະຍາດ COVID-19;
- ທຸກຄົນຈະຕ້ອງຖືກຈຳກັດບໍລິເວນ 14 ວັນ ຢູ່ໂຮງແຮມ ຫຼື ສູນ ທີ່ທາງຄະນະສະເພາະກິດຂັ້ນສູນກາງ ແລະ ທ້ອງຖິ່ນ ໄດ້ກຳນົດໄວ້ຢ່າງເຂັ້ມງວດ;
- ທຸກຄົນທີ່ໄດ້ເຂົ້າຈຳກັດບໍລິເວນຢູ່ໂຮງແຮມ ທີ່ຄະນະສະເພາະກິດກຳນົດໄວ້ ຈະຕ້ອງຮັບຜິດຊອບເອງ ສຳລັບຄ່າກິນຢູ່, ພັກເຊົາ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ;
- ພາຍຫຼັງ ຄົບກຳນົດຈຳກັດບໍລິເວນ 14 ວັນແລ້ວ ຖ້າບໍ່ມີອາການຜິດປົກກະຕິ, ແພດຈະອອກໃບຢັ້ງຢືນໃຫ້ ເພື່ອເປັນບ່ອນອີງສາມາດອອກໄປເຮືອນພັກຂອງຕົນ ແລະ ເຄື່ອນໄຫວເຮັດວຽກງານຕາມປົກກະຕິ ແຕ່ຕ້ອງສືບຕໍ່ປະຕິບັດມາດຕະການປ້ອງກັນການຕິດເຊື້ອ;
- ຖ້າບໍ່ປະຕິບັດຕາມຄຳແນະນຳທີ່ຄະນະສະເພາະກິດວາງອອກ ຈະຖືກປະຕິບັດວິໄນ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

2. **ຂາອອກ**

- ສຳລັບພົນລະເມືອງຕ່າງປະເທດທີ່ມີສະຖານເອກອັກຄະລັດຖະທູດປະຈຳ ສປປ ລາວ ຕ້ອງໄປລົງທະບຽນຢູ່ສະຖານເອກອັກຄະລັດຖະທູດດັ່ງກ່າວ ເພື່ອແຈ້ງຈຸດປະສົງການຂໍເດີນທາງອອກ ສປປ ລາວ ແລະ ຕ້ອງໄດ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ ຂອງປະເທດທີ່ຈະເດີນທາງເຂົ້າ;
- ສະຖານເອກອັກຄະລັດຖະທູດທີ່ກ່ຽວຂ້ອງ ຕ້ອງເຮັດໜັງສືສະເໜີມາຍັງກະຊວງການຕ່າງປະເທດ ພ້ອມບັນຊີລາຍຊື່, ເລກທີໜັງສືຜ່ານແດນ, ວັນເວລາ, ດ່ານທີ່ຈະເດີນທາງອອກ, ພາຫະນະໃນການເດີນທາງ ແລະ ລາຍລະອຽດອື່ນໆ ເພື່ອພິຈາລະນາອຳນວຍຄວາມສະດວກ;
- ສຳລັບ ພົນລະເມືອງລາວ ທີ່ມີຄວາມຈຳເປັນເດີນທາງໄປຕ່າງປະເທດ ສາມາດເດີນທາງໄປໄດ້ ຖ້າໄດ້ຮັບອະນຸຍາດຈາກປະເທດເຈົ້າພາບ ແຕ່ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການຂອງປະເທດດັ່ງກ່າວ.

3. **ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ເຖິງວັນທີ 17 ພຶດສະພາ 2020.**

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດ ຢ່າງເຂັ້ມງວດດ້ວຍ.

ຮອງລັດຖະມົນຕີ
ຮອງຄະນະສະເພາະກິດຂັ້ນສູນກາງ
ຫົວໜ້າຄະນະສະເພາະກິດກະຊວງການຕ່າງປະເທດ

ທອງສະຫວັນ ພົມວິຫານ